# ບົດທີ 7

# ພະເຈົ້າໃນພະຄຳພີເດີມ

ພະເຈົ້າປາກົດມາໃນສາມພະພາກ ເມື່ອພະເຢຊູຮັບບັບຕິສະມາຄື: ພະບິດາປາກົດມາດ້ວຍແສງ ພະສຸລະສຽງຈາກຟ້າພະບຸດເປັນຜູ້ຮັບບັບຕິສະມາ ແລະ ພະວິນຍານບໍລິສຸດມາເຫມືອນດັ່ງນົກເຂົາ.

ໃນພະຄຳພີເດີມບໍ່ມີຂໍ້ພິສູດເລື່ອງຕີເອກອະນຸພາບ ແຕ່ມີຄ້າຍຄືກັບເງົາທີ່ສະແດງເຖິງລັກສະນະຂອງພະເຈົ້າວ່າເປັນຫຼັກຖານນອກເຫນືອທີ່ມະນຸດເຮົາຈະເຂົ້າໃຈໄດ້.




**1** ພະທຳມັດທາຍລາຍງານ 3 ປະການໃດຈາກສະໄຫມປີທີ່ພະເຢຊູຫຽມຕົວ?

1. ____________________
2. ____________________
3. ____________________

ຕອບ:

**1** *1. ການປະກາດຂອງໂຢຮັນບັບຕິສະໂຕ 2. ພະເຢຊູຊົງຮັບບັບຕິສະມາ 3. ມານທົດລອງພະເຢຊູ*

**2** ໃນບົດກ່ອນເຮົາໄດ້ຮຽນກ່ຽວກັບເລື່ອງເຫດການທີສອງ ເຫດການນັ້ນຄືການເລີ້ມຕົ້ນປະກາດພະທຳຂອງພະເຢຊູ. ພະເຢຊູໄດ້ເລີ້ມຕົ້ນປ່າວປະກາດພະທຳໂດຍເຫດການໃດ? ________

**3** ມັດທາຍລາຍງານເລື່ອງພະເຢຊູຮັບສິນບັບຕິສະມາຈາກບົດໃດ ຂໍ້ໃດ ໄປເຖິງບົດໃດ ຂໍ້ໃດ?

________________________________________________________________

**4** ຄົນທີ່ຢູ່ແຄມແມ່ນ້ຳຢໍດາເນໃນມື້ນັ້ນຄິດວ່າເຂົາເຫັນແຕ່ຊ່າງໄມ້ຈາກນາຊາເລັດມາຮັບສິນບັບຕິສະມາຈາກໂຢຮັນ ບັບຕິສະໂຕ ແຕ່ໃນຂະນະດຽວກັນນັ້ນເຂົາອັດສະຈັນໃຈເພາະເຫັນການສຳແດງຂອງພະເຈົ້າ.

ກ. ແມ່ນໃຜປາກຈາກສະຫວັນ? ________________________________

ຂ. ແມ່ນໃຜຮັບສິນບັບຕິສະມາ? ________________________________

ຄ. ແມ່ນໃຜລົງມາເຫມືອນນົກເຂົາ? ________________________________

**5** ເຫດນີ້ຈຶ່ງເວົ້າວ່າ: ພະບິດາເປັນພະເຈົ້າ ພະບຸດເປັນພະ ____________________
ພະວິນຍານເປັນ ______________ (ຕື່ມຄວາມທີ່ຂາດ)
ເວົ້າເຖິງ “ຕີເອກອະນຸພາບ” ມີຄວາມຫມາຍດັ່ງຕໍ່ໄປນີ້:

ຕີ = ສາມ ເອກ = ຫນຶ່ງ
ລວມ “ສາມເປັນອຳນາດດຽວ” ອະນຸພາບ = ອຳນາດ
ເຮົາອາດຈະເວົ້າໄດ້ວ່າ ສາມຄົນ 1 ຕົວ (ອົງດຽວມີສາມພະພາກ)

**6** ພະຄຳພີສອນວ່າພະເຈົ້າມີແຕ່ອົງດຽວ ແຕ່ປາກົດມາໃນ 3 ພະພາກ, 3 ພະພາກນັ້ນຄື:

______________ ______________ ແລະ ______________

**7** ຄຳສອນທີ່ວ່າພະເຈົ້າມີສາມພະພາກໃນອົງດຽວກໍເອີ້ນວ່າ... (ຈົ່ງຫມາຍ √ ໃສ່ຄວາມທີ່ຖືກ)

_______ ຕີເອກອະນຸຍາດ _______ ຕີເອກອະນຸພາບ _______ ຕີນິຍະພາບ

ຕອບ:

*2* *ຮັບສິນບັບຕິສະມາ*

*3* *ມັດທາຍ 3:13-17*

*4* *ກ. ພະບິດາ ຂ. ພະບຸດ (ພະເຢຊູ) ຄ. ພະວິນຍານບໍລິສຸດ*

*5* *ເຈົາ.... ພະເຈົາ*

*6* *ພະບິດາ ພະບຸດ ພະວິນຍານບໍລິສຸດ*

*7* *ຕີເອກອະນຸພາບ*

**8** ຄຳວ່າ ຕີເອກອະນຸພາບຫມາຍຄວາມວ່າຢ່າງໃດ? (ໃນລາຍຊື່ຕໍ່ໄປນີ້ໃຫ້ທ່ານຂີດ √ ໃສ່ຂໍ້ຄວາມທີ່ຖືກ)

______ ກ. ມີພະເຈົ້າສາມອົງຕ່າງກັນ

______ ຂ. ມີພະເຈົ້າອົງດຽວທີ່ປາກົດມາໃນສາມພະພາກ

______ ຄ. ບໍ່ມີພະເຈົ້າ

______ ງ. ມີພະເຈົ້າອົງດຽວ ພະເຢຊູເປັນພະເຈົ້າບໍ່ໄດ້

______ ຈ. ມີພະເຈົ້າອົງດຽວ ພະວິນຍານເປັນພະເຈົ້າບໍ່ໄດ້

**9** ຫຼັກຄຳສອນທີ່ວ່າມີແຕ່ພະເຈົ້າອົງດຽວທີ່ປາກົດມາໃນສາມພະພາກ ຄຳສອນນັ້ນເອີ້ນວ່າຫຍັງ?

________________________________________________

**10** ພະເຈົ້າເປັນອົງດຽວທີ່ປາກົດມາໃນສາມພະພາກເຮົາຕ້ອງເຂົ້າໃຈວ່າບໍ່ແມ່ນສາມພະອົງແຕກຕ່າງກັນ ແຕ່ເປັນ ສາມພະພາກທີ່ລວມເຂົ້າກັນເປັນອົງດຽວ. ທີ່ເຮົາອ້າງເຖິງຕີເອກອະນຸພາບນັ້ນຫມາຍຄວາມວ່າພະເຈົ້າມີສາມພະພາກແຕ່ເປັນຈັກອົງ? ________________

**11** ຄຳວ່າ "ຕີເອກອະນຸພາບ" ຫມາຍຄວາມວ່າ ພະເຈົ້າເປັນ __________________ ທີ່ປາກົດມາ ໃນ ____________ ພະພາກ. ຫລືພະຜູ້ເປັນເຈົ້າເປັນສາມ ________ ທີ່ປາກົດມາໃນ ____________ ດຽວ. (ໃຫ້ຕື່ມຄວາມທີ່ຂາດ)

**12** ໃນບົດຮຽນກ່ອນນີ້ ທ່ານໄດ້ສຶກສາກ່ຽວກັບຄວາມປຽບທຽບ ຫລືສັນຍາລັກ.

ກ. ສັນຍາລັກໃດ ຕໍ່ໄປນີ້ທີ່ຫມາຍເຖິງສາມພະພາກ? ____________________



ເຄື່ອງຮອງຕີນໂຄມ



ໃບໄມ້ທີ່ເປັນສາມແງ່



ປາ

ຂ. ອັນໃດທີ່ເຫມາະສົມເພື່ອສະແດງເຖິງຕີເອກອະນຸພາບ? __________________

**ຕອບ:**

**8** *ຂ. ຖືກ*

**9** *ຕີເອກອະນຸພາບ*

**10** *ອົງດຽວ*

**11** *ອົງດຽວ...ສາມ...ພະພາກ...ອົງ*

**12** *ກ. ໃບໄມ້ທີ່ເປັນ 3 ແງ່    ຂ. ໃບໄມ້ທີ່ເປັນ 3 ແງ່*

**13** ໃບໄມ້ຊະນິດນີ້ຄ້າຍຄືໃບມັນຕົ້ນຫລືໃບຫມາກງົ້ວເປັນສັນຍາລັກຢ່າງເຫມະສົມທີ່ສະແດງເຖິງຕີເອກກະນຸພາບ ໄດ້ ເພາະວ່າເປັນສາມສ່ວນໃນໃບດຽວ.
ອັນນີ້ສະແດງເຖິງສາມ __________ ລວມເປັນພະເຈົ້າອົງ ______. (ຈົ່ງຕື່ມຄວາມທີ່ຂາດ)

**14** ໃນຂໍ້ພະຄຳພີຕໍ່ໄປນີ້ ມີຂໍ້ໃດແດ່ທີ່ອ້າງເຖິງສາມພະພາກໃນອົງພະຜູ້ເປັນເຈົ້າ? (ໃຫ້ຫມາຍໃສ່ຂໍ້ທີ່ເຫັນວ່າຖືກ)

_____ ກ. ມທ 28:19 _____ ຄ. II ກລທ 13:14

_____ ຂ. I ກລທ13:3 _____ ງ. ກຈກ 2:32-33

| | |
|---|---|
| ຝຶກ: | ຫຼັງຈາກທ່ານໄດ້ກວດຄຳຕອບໃນ 14 ແລ້ວໃຫ້ທ່ານເອົາສໍສີຂຽວແຕ້ມຮູບໃບໄມ້ແບບນັ້ນໃສ່ຂ້າງຂໍ້ພະຄຳພີທີ່ວ່າດ້ວຍຕີເອກອະນຸພາບ. |

**15** ໃນສະໄຫມພະຄຳພີເດີມມີແຕ່ຄົນຢິວທີ່ຮັບຮູ້ວ່າພະເຈົ້າມີແຕ່ອົງດຽວ. ພໍ່ແມ່ຄົນຢິວທຸກຄົນສອນລູກຈາກພະທຳ ພະບັນຍັດຄັ້ງທີສອງ 6:4 ວ່າ "ອິສະລາເອນເອີຍ ຈົ່ງຟັງເຖີດ ພະຜູ້ເປັນເຈົ້າອົງດຽວທີ່ນັ້ນທີ່ເປັນພະເຈົ້າຂອງເຮົາ" ແມ່ນຊາດໃດທີ່ຮັບຮູ້ວ່າມີແຕ່ພະເຈົ້າອົງດຽວ. (ໃຫ້ເລືອກເອົາຂໍ້ທີ່ເຫັນວ່າຖືກ)

ກ. ຊາດກະລີກ ຄ. ຊາດເອຢິບ

ຂ. ຊາດຢິວ ງ. ຊາດບາບີໂລນ

**16** ນອກຈາກພວກຊາດຢິວ ຊາດອື່ນໆ ນັ້ນນັບຖືພະເຈົ້າຫຼາຍອົງ ແຕ່ໃນພວກຄົນຢິວເດັກທຸກຄົນຮຽນຮູ້ວ່າຢ່າງໃດ? (ເລືອກເອົາຂໍ້ທີ່ຖືກ)
ກ. ພະເຢຊູຄຣິດຊົງເປັນຢູ່ສະເຫມີທັງໃນເວລາວານນີ້ ໃນເວລານີ້ ແລະສືບໆໄປເປັນນິດ.
ຂ. ຜົນຂອງພະວິນຍານນັ້ນຄືຄວາມຮັກ
ຄ. ພະຜູ້ເປັນເຈົ້າມີອົງດຽວເທົ່ານັ້ນ

**17** ພວກຄົນຢິວຕ່າງກັນກັບຊາດອື່ນໆ ໃນດ້ານໃດ? (ເລືອກເອົາຂໍ້ທີ່ຖືກ)
ກ. ໃນສະໄຫມພະຄຳພີເດີມມີແຕ່ຄົນຢິວທີ່ເຊື່ອໃນພະເຈົ້າອົງດຽວ
ຂ. ມີຫຼາຍຊາດເຊື່ອໃນພະເຈົ້າອົງດຽວ
ຄ. ທຸກຊາດໃນໂລກເຊື່ອໃນພະເຈົ້າຫຼາຍອົງ

ຕອບ:

**13** *ສາມພະພາກ... ອົງດຽວ*

**14** *ກ. ຄ. ແລະ ງ.ຖືກ*

**15** *ຂ.ຖືກ*

**16** *ຄ.ຖືກ*

**17** *ກ.ຖືກ*

**18** ກ. ມີແຕ່ຄົນຢິວໃນສະໄຫມພະຄຳພີເດີມທີ່ເຊື່ອໃນພະເຈົ້າອົງ ____________________
(ຈົ່ງຕື່ມຄວາມທີ່ຂາດ)

ຂ. ເລື່ອງນັ້ນເຮົາພົບໃນພະບັນຍັດຄັ້ງທີສອງ ບົດໃດ ຂໍ້ໃດ? ____________________

**19** ພະທຳຂອງສາດສະຫນາຢິວຄືເຫຼັ້ມໃດ? (ເລືອກເອົາຂໍ້ທີ່ຖືກ)

ກ. ພະຄຳພີເດີມ

ຂ. ພະຄຳພີໃຫມ່

ຄ. ທັງພະຄຳພີເດີມ ແລະ ພະຄຳພີໃຫມ່

**20** ໃນຄຳ "ຕີເອກອະນຸພາບ" (ເບິ່ງຄຳຖາມ 5 ກໍໄດ້)

ກ. "ຕີ" ແປວ່າຫຍັງ? ____________________

ຂ. "ເອກ" ແປວ່າຫຍັງ? ____________________

ຄ. "ອະນຸພາບ" ແປວ່າຫຍັງ? ____________________

**21** ລວມທັງ 4 ຄວາມ "ຕີເອກອະນຸພາບ" ແປວ່າຢ່າງໃດ? ____________________

*ພະຄຳພີເດີມສ່ວນຫຼາຍເວົ້າເຖິງແຕ່ຄວາມສຳພັນລະຫວ່າງ ພະເຈົ້າພະບິດາ ແລະ ພວກຊາດຢິວ. ແຕ່ມີບາງຂໍ້ທີ່ອ້າງເຖິງພະບຸດ ຫລືພະວິນຍານອີກດ້ວຍ.*

**22** ກ. ປະຖົມມະການ 1:2 ອ້າງເຖິງສະພາບໃດ? ____________________

ຂ. ພສສ 51:11 ດາວິດຂໍຈາກພະເຈົ້າວ່າ "ຢ່າຖອນເອົາ ____________________ ໄປ"
(ຕື່ມຄວາມທີ່ຂາດ)

ຄ. ໂຢເອນ 2:28 ເວົ້າເຖິງຄົນທັງປວງຈະຮັບຫຍັງ? ____________________

**23** ດັ່ງນັ້ນເຖິງວ່າພະຄຳພີເດີມອ້າງເຖິງພະບິດາສ່ວນຫຼາຍກໍຕາມ ແຕ່ຍັງມີບາງຂໍ້ເວົ້າເຖິງ ______________ ດ້ວຍ. (ຕື່ມຄວາມທີ່ຂາດ)

*ຄຳທຳນວາຍໃດໆ ໃນພະຄຳພີເດີມທີ່ວ່າໂດຍການສະເດັດມາຂອງ ພະເຢຊູຄຣິດ ແມ່ນເປັນຫຼັກຖານກ່ຽວກັບສະພາບພະບຸດ ຂອງ ພະເຈົ້າ.*

ຕອບ:

***18*** *ກ. ດຽວ ຂ. ບົດ 6 ຂໍ້ 4*

***19*** *ກ.ຖືກ*

***20*** *ກ. ສາມ ຂ. ນຶ່ງ ຄ. ອຳນາດ*

***21*** *ສາມເປັນອຳນາດດຽວ*

***22*** *ກ. ພະວິນຍານ ຂ. ພະວິນຍານ ຄ. ພະວິນຍານ*

***23*** *ພະວິນຍານ*

**24** ກ. ໃນ ເອຊາຢາ 7:14 ລູກຊາຍທີ່ຈະເກີດຊື່ຫຍັງ? ______________________________

ຂ. ຄຳວ່າ "ເອມານູເອນ" ແປວ່າໃຜຢູ່ກັບເຮົາ? __________________________________

**25** ໃນ ພສສ 2:7 ພະຜູ້ເປັນເຈົ້າກ່າວວ່າ "ມື້ນີ້ເຮົາຈະໄດ້ຮັບເຈົ້າໄວ້ເປັນ ________________ ຂອງເຮົາ ເຮົາຈະເປັນ ______________________________ ຂອງເຈົ້າ". (ຕື່ມຄວາມທີ່ຂາດ)

**26** ໃນເອຊາຢາ 9:6 ຕາມຂໍ້ຄວາມໃນວົງຢືມເດັກທີ່ເກີດມາຄື: (ຕື່ມຄວາມທີ່ຂາດ)

ກ. "________________________________ ທີ່ສະຫຼາດສ້ຽມແຫຼມ"

ຂ. "________________________________ ຜູ້ຊົງລິດ"

ຄ. "________________________________ ສັນຕິລາດ"

**27** ໃນມີກາ 5:2 ເດັກທີ່ຈະເກີດໃນບ້ານເບດເລເຮັມ ມາຈາກສະໄໝໃດ? ______________

**28** ໃນປຖກ 1:2 ແມ່ນໃຜຊົງເວີນວຽນຢູ່ເທິງນ້ຳ? __________________________________

**29** ໃນພສສ 51:11 ດາວິດຂໍນຳພະເຈົ້າຢ່າງໃດ? (ເລືອກ)

ກ. ຢ່າຖອນເອົາພະບິດາໄປ

ຂ. ຢ່າຖອນເອົາພະວິນຍານບໍລິສຸດຂອງພະອົງໄປ

ຄ. ຢ່າຖອນເອົາພະບຸດໄປ

**30** ໂຢເອນ 2:28 ເວົ້າເຖິງການປະທານຂອງໃຜ? __________________________________

*ດັ່ງນັ້ນປາກົດວ່າໃນພະຄຳພີເດີມມີຫຼັກຄຳສອນວ່າ ພະເຈົ້າມີອົງດຽວແທ້ ເຖິງວ່າພະຄຳພີເດີມອ້າງເຖິງພະບິດາເຈົ້າສ່ວນຫຼາຍ ແຕ່ຍັງມີຂໍ້ອ້າງເຖິງພະວິນຍານ ແລະ ພະບຸດດ້ວຍ.*

**31** ຄຳວ່າ "ພະເຈົ້າຊົງຢູ່ນຳເຮົາ" ພາສາເຮັບເລີວ່າຢ່າງໃດ? __________________________

**32** ຜູ້ທີ່ມາຈາກສະໄໝເດີມຈະເກີດມາຈາກບ້ານໃດ? ______________________________

ຕອບ:

***24*** *ກ. ເອມານູເອນ ຂ. ພະເຈາຊົງຢູ່ນຳເຮົາ*

***25*** *ລູກຊາຍ..... ພໍ່*

***26*** *ກ. ຜູ້ປຶກສາ ຂ. ພະເຈາຄ. ອົງ*

***27*** *ເດີມ*

***28*** *ພະວິນຍານຂອງພະເຈາ*

***29*** *ຂ.ຖືກ*

***30*** *ພະວິນຍານ*

***31*** *ເອມານູເອນ*

***32*** *ເບດເລເຮັມ*

**33** "ຜູ້ປຶກສາທີ່ສະຫຼາດສ່ຽມແຫຼມ", "ພະເຈົ້າຜູ້ຊົງລິດ", "ອົງສັນຕິລາດ" ປາກົດມາໃນສະພາບຄົນຂະໜາດໃດ? ______________________________________________

**34** ໃນຂໍ້ພະຄຳພີຕໍ່ໄປນີ້ໃຫ້ທ່ານໝາຍຂໍ້ໃດອ້າງເຖິງພະວິນຍານ ຂໍ້ໃດອ້າງເຖິງພະບຸດ?

ປຖກ 1:2 ______________________ ມີກາ 5:2 ______________________

ອຊຢ 7:14 ______________________ ໂຢເອນ 2:28 ______________________

ພສສ 2:7 ______________________ ພສສ 51:11 ______________________

ອຊຢ 9:6 ______________________

**35** ຄຳທີ່ແປວ່າ "ສາມເປັນອຳນາດດຽວ" ຄື: (ຈົ່ງໝາຍ √ ໃສ່ຄວາມທີ່ຖືກ)

__________ ຕີເອກອະນຸພາບ __________ ຕີຊາຍະພາບ __________ ຕີອານຸຍາດ

**36** ໃບໄມ້ທີ່ເປັນ 3 ແງ່ ອາດຈະເປັນສັນຍາລັກໝາຍເຖິງຫຍັງ? ____________________

**37** ໃນຕີເອກອະນຸພາບ ມີຈັກພະພາກທີ່ປາກົດມາໃນພະຄຳພີເດີມ? __________________

ຕອບ:

**33** *ເດັກນ້ອຍ*

**34** *ປຖກ 1:2 ໂຢເອນ 2:28 ແລະ ພສສ 51:11* *ພະວິນຍານ*

*ອຊຢ 7:14 ພສສ 2:7 ອຊຢ 9:6 ແລະ ມີກາ 5:2* *ພະບຸດ*

**35** *ຕີເອກອະນຸພາບ*

**36** *ຕີເອກອະນຸພາບ*

**37** *ທັງສາມ*